ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ...3932.../ກປ

ນະຄອນຫຼວງວຽງຈັນ, ວັນທີ 04 ກັນຍາ 2017

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ
## ຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຫົວພັນ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສປຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງຄະນະຮັບຜິດຊອບປັບປຸງພາລະບົດບາດກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 08 ພຶດສະພາ 2017;
- ອີງຕາມ ການຕົກລົງຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 30 ມິຖຸນາ 2017.

ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຫົວພັນ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດໃນການຄຸ້ມຄອງ, ກວດກາ, ຊຸກຍູ້ສົ່ງເສີມ ແລະ ພັດທະນາວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໃຫ້ມີປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຫົວພັນ ຂຽນເປັນຕົວອັກສອນຫຍໍ້ວ່າ "ກປຂ.ຫພ" ແມ່ນອົງການຈັດຕັ້ງຄຸ້ມຄອງຂັ້ນທ້ອງຖິ່ນ, ມີຖານະເທົ່າທຽມກັບພະແນກການອື່ນຂອງບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ທີ່ປະຈຳຢູ່ແຂວງຫົວພັນ ມີພາລະບົດບາດເປັນເສນາທິການທາງດ້ານວິຊາການ ໃຫ້ອົງການປົກຄອງແຂວງຫົວພັນ ຕາມສາຍຂວາງໃນການກຳນົດ ແລະ ຈັດຕັ້ງປະຕິບັດ

ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ແລະ ແຜນຍຸດທະສາດລວມຂອງກະຊວງກະສິກຳ ແລະ ປ່າໄມ້ ວາງອອກຢ່າງກົມກຽວ ແລະ ເປັນເສນາທິການດ້ານເຕັກນິກ, ວິຊາການ ໃຫ້ແກ່ກະຊວງກະສິກຳ ແລະ ປ່າໄມ້ ໃນການກຳນົດແຜນຍຸດທະສາດ, ແຜນງານ ແລະ ໂຄງການ ຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຫົວພັນ ໂດຍສອດຄ່ອງກັບຍຸດທະສາດລວມຂອງກະຊວງ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ, ດຳລັດ ແລະ ມະຕິຂອງລັດຖະບານ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ, ຄຳແນະນຳ ແລະ ນິຕິກຳອື່ນຂອງຂັ້ນເທິງວາງອອກ;
2. ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ແຜນຍຸດທະສາດຂອງຂະແໜງການກະສິກຳ ແລະ ປ່າໄມ້ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ ທີ່ສອດຄ່ອງກັບທ່າແຮງທ້ອງຖິ່ນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ຂັ້ນແຂວງ, ເມືອງ ແລະ ຮາກຖານ ໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້າບັນດານິຕິກຳ ແລະ ປັບປຸງລະບຽບການຕ່າງໆ ຕາມການແບ່ງຂັ້ນຄຸ້ມຄອງ, ປະຕິບັດຕາມກົນໄກ, ລະບຽບການຄຸ້ມຄອງພະນັກງານ ແລະ ມາດຕະຖານຕຳແໜ່ງບໍລິຫານປະເພດຕ່າງໆ ທີ່ກະຊວງວາງອອກ ຢ່າງເຂັ້ມງວດ ພ້ອມທັງຈັດຕັ້ງໂຄສະນາ, ເຜີຍແຜ່ ໃຫ້ແກ່ສັງຄົມຢ່າງກວ້າງຂວາງ;
4. ຄົ້ນຄວ້າ ແລະ ນຳສະເໜີ ການປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ວາງແຜນກໍ່ສ້າງ, ບຳລຸງຍົກລະດັບພະນັກງານ, ຄຸ້ມຄອງ-ນຳໃຊ້ ແລະ ປະຕິບັດນະໂຍບາຍຕ່າງໆ, ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ທີ່ກະທຳຜິດ ບົນພື້ນຖານຍຸດທະສາດຄວາມສະເໝີພາບຍິງ-ຊາຍ ຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້;
5. ພົວພັນ ແລະ ປະສານສົມທົບກັບຂະແໜງການ ແລະ ສູນອ້ອມຂ້າງ ຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ເພື່ອດຳເນີນການຕິດຕາມ, ກວດກາ ການແຈ້ງໜີ້ສິນ, ລາຍຮັບ-ລາຍຈ່າຍ, ຕ້ານ ແລະ ການສະກັດກັ້ນການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ຕ່າງໆ ຂອງພະນັກງານ-ລັດຖະກອນ ພ້ອມທັງພິຈາລະນາຄຳສະເໜີຂອງພົນລະເມືອງ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ;
6. ປະສານສົມທົບກັບຜູ້ຜະລິດ, ຜູ້ປະກອບການ ແລະ ຫົວໜ່ວຍທຸລະກິດພາຍໃນແຂວງ ໃນການປະຕິບັດມາດຕະຖານ ແລະ ການຂໍການຢັ້ງຢືນ ຕາມມາດຕະຖານກະສິກຳສະອາດ ໂດຍສະເພາະແມ່ນກະສິກຳອິນຊີ ແລະ ກະສິກຳທີ່ດີ ພ້ອມທັງກວດກາ ແລະ ຢັ້ງຢືນສຸຂະນາໄມພືດ ສຳລັບການສົ່ງອອກ, ສົ່ງອອກຕໍ່ນຳເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມອື່ນໆ ຢູ່ດ່ານກັກກັນພືດສາກົນ ພ້ອມທັງຄຸ້ມຄອງ, ຈັດຕັ້ງປະຕິບັດວຽກງານກັກກັນພືດ ປະຈຳດ່ານກັກກັນພືດທ້ອງຖິ່ນ ແລະ ດ່ານປະເພນີ;
7. ສຳຫຼວດ, ເກັບກຳຂໍ້ມູນ, ກວດກາ, ຕິດຕາມ, ເຝົ້າລະວັງ, ພະຍາກອນ, ປ້ອງກັນ ແລະ ກຳຈັດ, ອອກແຈ້ງການເຕືອນ, ບົດແນະນຳດ້ານເຕັກນິກ-ການປ້ອງກັນ ແລະ ຄວບຄຸມສັດຕູພືດ ໃນແຕ່ລະຊ່ວງລະດູການ ໃນທ້ອງຖິ່ນຂອງຕົນ;
8. ເປັນເຈົ້າການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ຊຸກຍູ້, ສົ່ງເສີມ, ກວດກາ, ຕິດຕາມ ແລະ ຈັດຕັ້ງປະຕິບັດວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ພາຍໃນຂອບເຂດແຂວງຂອງຕົນ;

9. ຄຸ້ມຄອງ, ເອື້ອອຳນວຍ, ຕິດຕາມ, ກວດກາ ການສ້າງ ແລະ ດຳເນີນທຸລະກິດ ກ່ຽວກັບການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ພາຍໃນຂອບເຂດແຂວງຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ກົດໝາຍ ແລະ ລະບຽບການກຳນົດ;
10. ຄຸ້ມຄອງ, ພັດທະນາລະບົບຊົນລະປະທານ ແລະ ການລະບາຍ ເພື່ອເຮັດໃຫ້ການສະໜອງນ້ຳ ແລະ ນຳໃຊ້ນ້ຳໃຫ້ມີປະສິດທິພາບສູງ;
11. ເປັນເຈົ້າການ ດຳເນີນການສຳຫຼວດ , ວາງແຜນ, ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ໃຫ້ຍືນຍົງ ພ້ອມທັງກຳນົດເຂດປູກໄມ້ , ຟື້ນຟູປ່າ, ວາງແຜນນຳໃຊ້ທີ່ດິນ, ປ່າໄມ້ຂັ້ນບ້ານ ຕິດພັນກັບການຈັດສັນອາຊີບ ແລະ ຢຸດຕິການຖາງປ່າເຮັດໄຮ່ ແລະ ເປັນເຈົ້າການໃນການຄຸ້ມຄອງ ການຂຸດຄົ້ນໄມ້ ແລະ ເຄື່ອນຍ້າຍໄມ້ ແລະ ຊັບພະຍາກອນປ່າໄມ້, ສັດນ້ຳ ແລະ ສັດປ່າ ຕາມທີ່ກົດໝາຍ, ລະບຽບການ ແລະ ສົນທິສັນຍາສາກົນໄດ້ກຳນົດ;
12. ເປັນເຈົ້າການຊີ້ນຳ, ຊຸກຍູ້, ຕິດຕາມ, ດຳເນີນການກວດກາ ເຂດຂຸດຄົ້ນໄມ້, ເຂດສຳປະທານ, ຫັນປ່ຽນປ່າໄມ້, ການຖາງປ່າ, ການທຳລາຍປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ຖິ່ນທີ່ຢູ່ອາໄສຂອງສັດນ້ຳ-ສັດປ່າ, ສະໜາມໄມ້ I, II, ໂຮງເລື່ອຍ, ໂຮງຊອຍ, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນີເຈີ, ໂຮງງານທີ່ນຳໃຊ້ໄມ້ເປັນພະລັງງານ, ສາງມ້ຽນໄມ້, ຮ້ານຂາຍໄມ້ ກຳນົດມາດຕະການຕ້ານ ແລະ ສະກັດກັ້ນການລັກລອບຕັດໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ-ສັດປ່າ ແລະ ຊີວະນາໆ ພັນ, ການຊື້-ຂາຍ, ເຄື່ອນຍ້າຍໄມ້-ເຄື່ອງປ່າຂອງດົງ, ຊີວະນາໆ ພັນ, ສັດນ້ຳ-ສັດປ່າ ທັງພາຍໃນ ແລະ ຕ່າງປະເທດ ທີ່ຜິດກົດໝາຍ ພ້ອມທັງດຳເນີນການສືບສວນ-ສອບສວນຕໍ່ຜູ້ກະທຳຜິດກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ແລະ ລະບຽບການທີ່ກຳນົດໄວ້ ໃນຂອບເຂດຄວາມຮັບຜິດຊອບຂອງຕົນບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
13. ສຶກສາ ຄົ້ນຄວ້າ, ວາງແຜນພັດທະນາກະສິກຳ ແລະ ປ່າໄມ້ ຂອງທ້ອງຖິ່ນຕົນຮັບຜິດຊອບຢ່າງມີຈຸດສຸມ, ສ້າງເປັນໂຄງການສະເພາະ, ກຳນົດຈັດສັນແບ່ງເຂດທີ່ດິນສຳລັບການປູກ-ການລ້ຽງ ເພື່ອຜະລິດສະບຽງອາຫານ, ຜະລິດເປັນສິນຄ້າ ໃຫ້ສອດຄ່ອງກັບທ່າແຮງຂອງທ້ອງຖິ່ນ ເພື່ອນຳສະເໜີຂັ້ນເທິງອະນຸມັດ;
14. ດຳເນີນການສຳຫຼວດ, ຈັດສັນ, ກຳນົດແບ່ງເຂດກະສິກຳ, ດິນເຂດສ້າງຊົນລະປະທານ ພ້ອມທັງຄົ້ນຄວ້ານຳສະເໜີຂຶ້ນທະບຽນທີ່ດິນດັ່ງກ່າວ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງການນຳໃຊ້ຢ່າງຖືກຕ້ອງ ແລະ ແທດເໝາະກັບເງື່ອນໄຂຕົວຈິງ;
15. ຊຸກຍູ້ ສົ່ງເສີມການນຳໃຊ້ເຕັກນິກການຜະລິດ ແລະ ການປຸງແຕ່ງກະສິກຳພາຍໃນແຂວງ ດ້ວຍການນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດ, ເຄື່ອງມືກົນຈັກ ແລະ ວິທີການກະເສດສຸມທີ່ກ້າວໜ້າທັນສະໄໝເຂົ້າໃນການປູກຝັງ, ລ້ຽງສັດ ເພື່ອຍົກສະມັດຕະພາບ, ປັບປຸງຄຸນນະພາບ ແລະ ປຸງແຕ່ງ ສ້າງມູນຄ່າເພີ່ມໃຫ້ຜົນຜະລິດ, ຫຼຸດຜ່ອນຕົ້ນທຶນການຜະລິດ ບົນພື້ນຖານຫຼັກການກະສິກຳສະອາດ ຕາມທິດພັດທະນາສີຂຽວ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ຍືນຍົງ;
16. ພົວພັນເອົາແນວພັນພືດ, ແນວພັນສັດ, ປາ ແລະ ສັດນ້ຳ ທີ່ໃຫ້ຜົນຜະລິດສູງລົງສູ່ທ້ອງຖິ່ນ ໂດຍມອບໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ, ສູນສົ່ງເສີມກະສິກຳ ແລະ ປ່າໄມ້ ແລະ ສະຖານີບໍລິການເຕັກນິກ ນຳໄປຊຸກຍູ້ສົ່ງເສີມຊາວກະສິກອນ ແລະ ກຸ່ມການຜະລິດອື່ນໆ;
17. ຄົ້ນຄວ້າ, ປະສານສົມທົບໃນການສ້າງຕັ້ງສູນສົ່ງເສີມກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ສະຖານີບໍລິການເຕັກນິກກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເພື່ອສາມາດບໍລິການ, ຝຶກອົບຮົມຖ່າຍທອດເຕັກນິກວິທະຍາສາດອັນໃໝ່ ໃຫ້ປະຊາຊົນ, ຜູ້ຜະລິດ, ຜູ້ປະກອບການ ພ້ອມທັງສ້າງວິຊາການກະສິກຳ ແລະ ປ່າໄມ້ຂັ້ນບ້ານ;

18. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຈັດ ແລະ ຄຸ້ມຄອງຕະຫຼາດນັດ, ງານວາງສະແດງສິນຄ້າ ແລະ ກົນຈັກກະສິກຳພາຍໃນແຂວງ ພ້ອມທັງປະຕິບັດມາດຕະການດ້ານອື່ນ ທີ່ເຮັດໃຫ້ມີປະໂຫຍດ ແລະ ມີປະສິດທິຜົນ;
19. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຊີ້ນຳ, ຊຸກຍູ້, ສົ່ງເສີມການສ້າງເສດຖະກິດຄອບຄົວຈັດຕັ້ງກຸ່ມການຜະລິດ, ກຸ່ມສິນເຊື່ອ, ກອງທຶນພັດທະນາບ້ານ, ສະຫະກອນກະສິກຳ ແລະ ປ່າໄມ້ ແບບໃໝ່ເພື່ອການຜະລິດເປັນສິນຄ້າ, ຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເທື່ອລະກ້າວໂດຍການນຳໃຊ້ກົນຈັກເຂົ້າໃນການຜະລິດ ເຮັດໃຫ້ການຜະລິດມີການຂະຫຍາຍຕົວ, ສາມາດຕອບສະໜອງການບໍລິໂພກ, ການປຸງແຕ່ງພາຍໃນ ແລະ ເປັນສິນຄ້າສົ່ງອອກຕິດພັນກັບຕະຫຼາດຈຳໜ່າຍ;
20. ເປັນເຈົ້າການປະກອບສ່ວນປະສານງານ ເຂົ້າໃນວຽກງານພັດທະນາຊົນນະບົດ ແລະ ຈຸດສຸມບູລິມະສິດຂອງແຂວງ ຕາມຂອບເຂດຄວາມຮັບຜິດຊອບຂອງຂະແໜງການກະສິກຳ ແລະ ປ່າໄມ້;
21. ຄົ້ນຄວ້າ ໃນການຍາດແຍ່ງການຊ່ວຍເຫຼືອ ທັງພາຍໃນ ແລະ ພາຍນອກ ໃນການຮ່ວມມື, ລົງທຶນ ພ້ອມທັງມີການຕິດຕາມບັນດາໂຄງການທີ່ຈັດຕັ້ງປະຕິບັດຢູ່ທ້ອງຖິ່ນຂອງຕົນ ໃຫ້ມີປະສິດທິຜົນ;
22. ຂຶ້ນແຜນງົບປະມານຂອງພະແນກ, ຄຸ້ມຄອງບໍລິຫານ-ການເງິນ, ຊັບສິນ ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບ ແລະ ລາຍງານ ໃຫ້ຂັ້ນເທິງ ຕາມລະບຽບການທີ່ກຳນົດໄວ້; ເກັບກຳສະຖິຕິ ແລະ ສະໜອງຂໍ້ມູນຂ່າວສານດ້ານກະສິກຳ ແລະ ປ່າໄມ້ ເພື່ອເປັນບ່ອນອີງໃນການວາງແຜນ, ການຈັດຕັ້ງປະຕິບັດໂຄງການ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນບັນດາແຜນງານ, ແຜນການ ແລະ ໂຄງການທີ່ຈັດຕັ້ງປະຕິບັດຢູ່ທ້ອງຖິ່ນຂອງຕົນ ໃຫ້ມີປະສິດທິຜົນ;
23. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ**

1. ສະເໜີ ປັບປຸງກົງຈັກການຈັດຕັ້ງຂອງຕົນຕໍ່ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບການກຳນົດຕຳແໜ່ງງານ, ບັນຈຸ-ສັບຊ້ອນ ແລະ ຈັດວາງບຸກຄະລະກອນພາຍໃນພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ກົດໝາຍ ແລະ ກົດລະບຽບກຳນົດໄວ້ ຕາມທິດກະທັດລັດ, ເຂັ້ມແຂງ ແລະ ມີປະສິດທິພາບ;
2. ຊີ້ນຳ, ຄຸ້ມຄອງຕາມສາຍຕັ້ງ ທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດໃນການຕົກລົງບັນຫາຢ່າງລະອຽດ ແລະ ຈະແຈ້ງ;
3. ຮຽກໂຮມພະນັກງານນຳພາຄຸ້ມຄອງ ແລະ ນັກວິຊາການໃນຄວາມຮັບຜິດຊອບຂອງຕົນ, ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ, ເຂົ້າຮ່ວມງານວາງສະແດງສິນຄ້າກະສິກຳ ແລະ ກົນຈັກກະສິກຳ ແລະ ຕະຫຼາດນັດ, ຝຶກອົບຮົມ, ສຳມະນາວິຊາການ ແລະ ລົງເຮັດວຽກຢູ່ທ້ອງຖິ່ນ, ຮາກຖານ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;
4. ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ດ້ານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ບົນພື້ນຖານກົດໝາຍ ແລະ ລະບຽບການໃນແຕ່ລະໄລຍະ;
5. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ຊັບສິນຂອງລັດ, ການຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການກຳນົດໄວ້;
6. ຄຸ້ມຄອງ, ແບ່ງປັນ ແລະ ມອບໝາຍແຜນການ, ງົບປະມານ, ພາຫະນະ ແລະ ອຸປະກອນ ທີ່ໄດ້ຮັບອະນຸມັດຈາກຂັ້ນເທິງໃຫ້ບັນດາຂະແໜງການ, ສູນ, ໂຄງການ ອ້ອມຂ້າງພະແນກ, ຫ້ອງການກະສິກຳ

ແລະ ປ່າໄມ້ ປະຈຳເມືອງ ແລະ ຫົວໜ່ວຍວິຊາການທີ່ຂຶ້ນກັບຕົນ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງ;

7. ສຶກສາ, ຄົ້ນຄວ້າ ແລະ ນຳສະເໜີ ກ່ຽວກັບໂຄງປະກອບການຈັດຕັ້ງ, ກຳນົດຕຳແໜ່ງງານ, ລະບອບແບບແຜນວິທີເຮັດວຽກ ພ້ອມທັງສະເໜີ ສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກຂະແໜງການ, ໜ່ວຍງານວິຊາການ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;
8. ຄຸ້ມຄອງ, ນຳໃຊ້, ຈັດວາງ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;
9. ຄົ້ນຄວ້າ, ນຳສະເໜີຂັ້ນເທິງ ກ່ຽວກັບການຂໍອະນຸມັດການລົງທຶນຂອງນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ໃນຂະແໜງການກະສິກຳ ແລະ ປ່າໄມ້ ຕາມລະບົບແບ່ງຂັ້ນຄຸ້ມຄອງ ຕະຫຼອດເຖິງການສະເໜີຂໍອະນຸມັດສ້າງຕັ້ງ ຫຼື ຍຸບເລີກກິດຈະການປຸງແຕ່ງ ແລະ ການຈັດຕັ້ງການຜະລິດກະສິກຳ ແລະ ປ່າໄມ້ ຕາມກົດໝາຍ ວ່າດ້ວຍການລົງທຶນ ຂອງ ສປປ ລາວ;
10. ດຳເນີນການກວດກາຜົນການຈັດຕັ້ງປະຕິບັດ ແຜນງານ, ແຜນການ ແລະ ໂຄງການພັດທະນາກະສິກຳ ແລະ ປ່າໄມ້ ເພື່ອສະຫຼຸບ, ສັງລວມ, ວິໄຈ ແລະ ປະເມີນຜົນ ໃຫ້ເຫັນດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ ເພື່ອວາງມາດຕະການແກ້ໄຂໃນຕໍ່ໜ້າ;
11. ອອກແຈ້ງການ, ໃຫ້ຄຳແນະນຳຕ່າງໆ ຕາມພາລະບົດບາດຕໍ່ບັນດາຂະແໜງການ ແລະ ສູນອ້ອມຂ້າງພະແນກ, ຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ, ໂຄງການ, ຫົວໜ່ວຍວິຊາການ ແລະ ຫົວໜ່ວຍການຜະລິດທຸລະກິດກະສິກຳ ແລະ ປ່າໄມ້ ທີ່ນອນຢູ່ໃນການຄຸ້ມຄອງຂອງຕົນ;
12. ຄົ້ນຄວ້າ, ວາງແຜນ ແລະ ນຳສະເໜີການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານພັດທະນາຊົນນະບົດ ເພື່ອຊອກຫາຮູບແບບ ແລະ ວິທີການທີ່ເໝາະສົມໃນການຈັດສັນພູມລຳເນົາ, ການຝຶກອົບຮົມວິຊາຊີບ ແລະ ຈັດສັນອາຊີບ ທີ່ໃຫ້ແກ່ປະຊາຊົນພາຍຫຼັງຢຸດຕິການຖາງປ່າເຮັດໄຮ່;
13. ປະຕິບັດສິດອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກ. ກົງຈັກຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຫົວພັນ ປະກອບດ້ວຍ:

1. ຫ້ອງການບໍລິຫານ ແລະ ຈັດຕັ້ງ;
2. ຂະແໜງກວດກາລັດ;
3. ຂະແໜງແຜນການ ແລະ ການເງິນ;
4. ຂະແໜງປູກຝັງ;
5. ຂະແໜງລ້ຽງສັດ ແລະ ການປະມົງ;
6. ຂະແໜງປ່າໄມ້;
7. ກອງກວດກາປ່າໄມ້;
8. ຂະແໜງຊົນລະປະທານ;
9. ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ;
10. ຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ;
11. ສູນສົ່ງເສີມເຕັກນິກກະສິກຳ ແລະ ປ່າໄມ້ ຮ່ອມມືລາວ-ຫວຽດນາມ ບ້ານອີ້ງ;

12. ສູນສົ່ງເສີມເຕັກນິກກະສິກຳ ແລະ ປ່າໄມ້ ສິບຮາວ.

ນອກຈາກນີ້, ຍັງມີ ກອງຄຸ້ມຄອງເຂດປ່າສະຫງວນ ແລະ ປ່າປ້ອງກັນ ຈຳນວນໜຶ່ງ ຊຶ່ງມີຖານະທຽບເທົ່າກັບຂະແໜງ.

ຂ. ກົງຈັກຂັ້ນເມືອງ ປະກອບດ້ວຍ: ຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງຊຳເໜືອ, ເມືອງຊຽງຄໍ້, ເມືອງວຽງໄຊ, ເມືອງຫົວເມືອງ, ເມືອງໃຕ້ຊຳ, ເມືອງສົບເບົາ, ເມືອງແອດ, ເມືອງກວັນ, ເມືອງຊ່ອນ ແລະ ເມືອງຮ້ຽມ ແຕ່ລະເມືອງ ມີ 09 ໜ່ວຍງານ:

1. ໜ່ວຍງານບໍລິຫານ ແລະ ຈັດຕັ້ງ;
2. ໜ່ວຍງານກວດກາລັດ;
3. ໜ່ວຍງານແຜນການ ແລະ ການເງິນ;
4. ໜ່ວຍງານປູກຝັງ;
5. ໜ່ວຍງານລ້ຽງສັດ ແລະ ການປະມົງ;
6. ໜ່ວຍງານປ່າໄມ້;
7. ໜ່ວຍງານກວດກາປ່າໄມ້;
8. ໜ່ວຍງານຊົນລະປະທານ;
9. ໜ່ວຍງານພັດທະນາຊົນນະບົດ ແລະ ສະຫະກອນ;
10. ສະຖານີບໍລິການເຕັກນິກ ກະສິກຳ ແລະ ປ່າໄມ້ ຈຸດສຸມບ້ານແວ່ນ ເມືອງຊຳເໜືອ;
11. ສະຖານີບໍລິການເຕັກນິກ ກະສິກຳ ແລະ ປ່າໄມ້ ຈຸດສຸມບ້ານຢືນ ເມືອງຊຳເໜືອ;
12. ສະຖານີບໍລິການເຕັກນິກ ກະສິກຳ ແລະ ປ່າໄມ້ ຈຸດສຸມດ່ານຊຽງ ເມືອງຫົວເມືອງ;
13. ສະຖານີບໍລິການເຕັກນິກ ກະສິກຳ ແລະ ປ່າໄມ້ ຈຸດສຸມບ້ານເປີ້ ເມືອງຊ່ອນ;
14. ສະຖານີບໍລິການເຕັກນິກ ກະສິກຳ ແລະ ປ່າໄມ້ ຈຸດສຸມແຈຟ່າຍ ເມືອງແອດ;
15. ສະຖານີບໍລິການເຕັກນິກ ກະສິກຳ ແລະ ປ່າໄມ້ ຈຸດສຸມລາວຮຸ່ງພຽງສາ ເມືອງຊຽງຄໍ້;
16. ສະຖານີບໍລິການເຕັກນິກ ກະສິກຳ ແລະ ປ່າໄມ້ ຫ້ວຍສາ ເມືອງຊຽງຄໍ້.

ນອກຈາກກົງຈັກທີ່ກ່າວມາຂ້າງເທິງນັ້ນ, ຍັງມີຈຸງານກວດກາປ່າໄມ້ບ້ານ ແລະ ດ່ານກວດກາຊັບພະຍາກອນປ່າໄມ້ ທີ່ເປັນຫົວໜ່ວຍທາງດ້ານວິຊາການຂອງຕົນ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ກ. ບຸກຄະລາກອນຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຫົວພັນ ປະກອບມີ:

1. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ຈຳນວນໜຶ່ງ;
2. ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ, ຫົວໜ້າສູນ, ຮອງຫົວໜ້າສູນ ແລະ ລັດຖະກອນ ວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

ຂ. ບຸກຄະລາກອນຂອງຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ ປະກອບມີ:

1. ຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ ຈຳນວນໜຶ່ງ;
2. ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ, ຫົວໜ້າສະຖານີ, ຮອງຫົວໜ້າສະຖານີ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

## ໝວດທີ 4
## ໜ້າທີ່ ຂອງຫ້ອງການ, ບັນດາຂະແໜງ ແລະ ສູນ

**ມາດຕາ 7 ໜ້າທີ່ ຂອງຫ້ອງການບໍລິຫານ ແລະ ຈັດຕັ້ງ**

1. ເກັບກຳສະຖິຕິ ແລະ ຊີວະປະຫວັດຂອງພະນັກງານ-ລັດຖະກອນ ທີ່ຂຶ້ນກັບ ພະແນກກະສິກຳ ແລະ ປ່າໄມ້ ແລະ ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ ເພື່ອເປັນຖານຂໍ້ມູນບຸກຄະລາກອນ ຕອບສະໜອງໃຫ້ແກ່ການວາງແຜນຄຸ້ມຄອງ-ນຳໃຊ້ ພະນັກງານ;
2. ຄົ້ນຄວ້າ, ນຳສະເໜີ ການປັບປຸງກົງຈັກການຈັດຕັ້ງຂອງຫ້ອງການ, ຂະແໜງ, ສູນ ແລະ ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ, ສະຖານີ ພ້ອມທັງກຳນົດຕຳແໜ່ງງານ, ແຜນກໍ່ສ້າງພະນັກງານ, ຄຸ້ມຄອງ, ເກັບກຳ ສັງລວມສະຖິຕິບຸກຄະລາກອນ, ປະເມີນຜົນການປະຕິບັດໜ້າທີ່, ປະຕິບັດນະໂຍບາຍ, ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ທີ່ກະທຳຜິດ ຕາມລະບຽບກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;
3. ເປັນເຈົ້າການຄຸ້ມຄອງບໍລິຫານຫ້ອງການ ແລະ ງົບປະມານ ການເງິນ-ການບັນຊີ, ພັດທະນາການຈັດຕັ້ງ, ການພັດທະນາຊັບພະຍາກອນມະນຸດ ລວມທັງການພັດທະນາຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ, ການນຳໃຊ້, ປົກປັກຮັກສາຊັບສິນຂອງລັດ ໃຫ້ເກີດຜົນປະໂຫຍດສູງ;
4. ຄົ້ນຄວ້າ, ສ້າງແຜນ ການເຄື່ອນໄຫວປະຈຳເດືອນ, ປະຈຳ 3 ເດືອນ, 6 ເດືອນ, ປະຈຳປີ ຮ່ວມກັບຄະນະພັກ ແລະ ຄະນະພະແນກ ພ້ອມທັງປະສານກັບບັນດາຂະແໜງການທີ່ກ່ຽວຂ້ອງຂອງພະແນກ ແລະ ເມືອງ ເພື່ອອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານ ໃຫ້ມີຜົນສຳເລັດ;
5. ຕິດຕາມ, ກວດກາ, ຄຸ້ມຄອງການນຳໃຊ້ງົບປະມານ, ພາຫະນະ, ວັດຖຸສິ່ງຂອງ, ຊັບສົມບັດລວມຂອງພະແນກ ແລະ ການແຈ້ງຊັບສິນ, ໜີ້ສິນ, ລາຍຮັບ-ລາຍຈ່າຍຕ່າງໆ ຂອງພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງພະແນກ;
6. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງຂະແໜງກວດກາລັດ**

1. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ລະບຽບ, ກົດໝາຍ ກ່ຽວກັບວຽກງານກວດກາ ທີ່ກ່ຽວພັນກັບພະແນກກະສິກຳ ແລະ ປ່າໄມ້ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງຕິດຕາມ, ກວດກາ ການປະຕິບັດນະໂຍບາຍພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງພະແນກ ແລະ ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ;
2. ເປັນເຈົ້າການໃນການຕ້ານ ແລະ ການສະກັດກັ້ນການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ຕ່າງໆ ຂອງພະນັກງານ-ລັດຖະກອນຂອງຕົນ;
3. ຕິດຕາມ, ກວດກາ ການແຈ້ງຊັບສິນ, ໜີ້ສິນ, ລາຍຮັບ-ລາຍຈ່າຍ ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ໃນຂອບເຂດຄວາມຮັບຜິດຊອບຂອງພະແນກ;
4. ດຳເນີນການສືບສວນ-ສອບສວນ ຄະດີການສໍ້ລາດບັງຫຼວງ, ສະຫຼຸບ ແລະ ປະກອບສຳນວນ ສົ່ງໃຫ້ຄະນະພັກ, ຄະນະນຳພະແນກ ພິຈາລະນາ;
5. ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ຄຳສະເໜີຂອງພົນລະເມືອງ ກ່ຽວກັບການກະທຳ ຫຼື ການຕົກລົງບັນຫາໃດໜຶ່ງ ທີ່ລະເມີດຕໍ່ ລະບຽບ, ກົດໝາຍ ຂອງການຈັດຕັ້ງ ຫຼື ພະນັກງານ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ຄົ້ນຄວ້າພິຈາລະນາຄຳສະເໜີ ຂອງພົນລະເມືອງ ທີ່ຂະແໜງການກະສິກຳ ແລະ ປ່າໄມ້ ຕາມສາຍຕັ້ງ

ໄດ້ແກ້ໄຂໄປແລ້ວ ແຕ່ພົນລະເມືອງຜູ້ນັ້ນເຫັນວ່າບໍ່ເໝາະສົມ;

7. ພົວພັນ ແລະ ປະສານສົມທົບກັບຂະແໜງການ ແລະ ສູນສົ່ງເສີມ ອ້ອມຂ້າງພະແນກ ແລະ ບັນດາຫ້ອງການກະສິກໍາ ແລະ ປ່າໄມ້ ປະຈໍາເມືອງ ເພື່ອດໍາເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;
8. ສະເໜີວິທີການແກ້ໄຂຜົນຂອງການກວດກາລັດ ໃຫ້ຫົວໜ້າພະແນກ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງ;
9. ຕິດຕາມ, ກວດກາການປະຕິບັດນະໂຍບາຍຍ້ອງຍໍ ແລະ ວິໄນຕໍ່ສະມາຊິກພັກ, ພະນັກງານ-ລັດຖະກອນຂອງຕົນ;
10. ປະສານສົມທົບກັບປະທານກວດກາພັກ-ລັດ ຂອງເມືອງ ດໍາເນີນການກວດກາ ການຈັດຕັ້ງປະຕິບັດພາລະບົດບາດ, ແຜນການ, ໂຄງການຂອງບັນດາຫ້ອງການກະສິກໍາ ແລະ ປ່າໄມ້ ປະຈໍາເມືອງ ຕາມການຕົກລົງເຫັນດີຂອງຫົວໜ້າພະແນກ ແລະ ປະທານກວດກາພັກ-ລັດ ແຂວງ;
11. ຊຸກຍູ້ ຕິດຕາມ, ກວດກາ ໜ່ວຍງານກວດກາລັດ ຂອງບັນດາຫ້ອງການກະສິກໍາ ແລະ ປ່າໄມ້ ປະຈໍາເມືອງ ໃຫ້ເຄື່ອນໄຫວຕາມພາລະບົດບາດ;
12. ຂຶ້ນແຜນ, ຄຸ້ມຄອງນໍາໃຊ້ງົບປະມານ, ພາຫະນະ ແລະ ຊັບສົມບັດ ຮັບໃຊ້ຕ່າງໆໃຫ້ແກ່ການເຄື່ອນໄຫວຂອງຂະແໜງກວດກາລັດ ພ້ອມທັງສະຫຼຸບ, ສັງລວມ ຜົນຂອງການຈັດຕັ້ງປະຕິບັດວຽກງານປະຈໍາເດືອນ, 3 ເດືອນ, 6 ເດືອນ ແລະ ປະຈໍາປີ ເພື່ອລາຍງານຂັ້ນເທິງ ຢ່າງເປັນປົກກະຕິ;
13. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງຂະແໜງແຜນການ ແລະ ການເງິນ**

1. ເປັນໃຈກາງໃນການປະສານສົມທົບກັບກົມແຜນການ ແລະ ການເງິນ ກະຊວງກະສິກໍາ ແລະ ປ່າໄມ້ ແລະ ຂະແໜງການອ້ອມຂ້າງພະແນກ, ບັນດາຫ້ອງການກະສິກໍາ ແລະ ປ່າໄມ້ ປະຈໍາເມືອງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອສ້າງແຜນການ ແລະ ແຜນງົບປະມານການລົງທຶນຂອງລັດ ດ້ານກະສິກໍາ ແລະ ປ່າໄມ້ ໃນແຕ່ລະໄລຍະ;
2. ສະຫຼຸບ, ຄຸ້ມຄອງຢ່າງລວມສູນໃນການຈັດຕັ້ງປະຕິບັດ ແຜນການ, ແຜນງົບປະມານການລົງທຶນຂອງພະແນກ ທີ່ໄດ້ຮັບອະນຸມັດຈາກສະພາແຫ່ງຊາດ ກໍຄືແຈ້ງການຂອງແຂວງ ໃຫ້ຈັດຕັ້ງປະຕິບັດແຜນການ ແລະ ແຜນງົບປະມານແຕ່ລະປີ;
3. ຄົ້ນຄວ້າ ແລະ ຜັນຂະຫຍາຍ ການຈັດຕັ້ງປະຕິບັດລະບຽບການໃນການຄຸ້ມຄອງວຽກງານ ແຜນການ, ແຜນງົບປະມານການລົງທຶນຂອງລັດຮ່ວມມືກັບສາກົນ, ເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນ ໃນການລົງທຶນທຸລະກິດໂຄງການ ແລະ ວຽກງານສະຖິຕິກະສິກໍາ ແລະ ປ່າໄມ້ ໃຫ້ມີປະສິດທິພາບ;
4. ປະສານງານວຽກງານການຮ່ວມມື, ການຊ່ວຍເຫຼືອ ແລະ ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງທຶນໂຄງການ, ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມຂອງສາກົນ, ເຊື່ອມໂຍງເສດຖະກິດ ພາກພື້ນ ແລະ ສາກົນ, ທຸລະກິດໂຄງການ, ວຽກງານສະຖິຕິກະສິກໍາ ແລະ ປ່າໄມ້ ແລະ ຈາກແຫຼ່ງທຶນອື່ນ ບົນພື້ນຖານສ້າງເປັນໂຄງການຄຸ້ມຄອງ ຕາມກົດໝາຍ ແລະ ລະບຽບການທີ່ໄດ້ກໍານົດໄວ້;
5. ຮັບຜິດຊອບຄຸ້ມຄອງງົບປະມານການລົງທຶນຂອງພະແນກ ໃນງົບປະມານການລົງທຶນຂອງລັດ, ກອງທຶນພັດທະນາ, ຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກການລົງທຶນຂອງຜູ້ປະກອບການ ແລະ ທຶນອື່ນໆ;
6. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການ ແລະ ແຜນງົບປະມານການລົງທຶນຂອງລັດ, ໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມ, ໂຄງການ

ລົງທຶນຂອງຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໃນຂະແໜງການກະສິກໍາ ແລະ ປ່າໄມ້, ຮ່ວມກວດກາການຈັດຕັ້ງປະຕິບັດແຜນງົບປະມານການລົງທຶນຂອງລັດ, ເກັບກໍາ, ລາຍງານ ສະຖິຕິ ແລະ ຂໍ້ມູນກະສິກໍາ ແລະ ປ່າໄມ້ ຕາມການມອບໝາຍຂອງຂັ້ນເທິງ;

7. ສະຫຼຸບ, ສັງລວມ ຜົນຂອງການຈັດຕັ້ງປະຕິບັດວຽກງານ ປະຈໍາອາທິດ, ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈໍາປີ ເພື່ອລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
8. ປະຕິບັດຕາມໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງຂະແໜງປູກຝັງ**

1. ຜັນຂະຫຍາຍນະໂຍບາຍກະສິກໍາສະອາດ ແລະ ຍຸດທະສາດ ພັດທະນາການປູກຝັງ ໃຫ້ເປັນແຜນງານ ໂຄງການ ແລະ ກິດຈະກໍາອັນລະອຽດ ຢູ່ພາຍໃນແຂວງ ພ້ອມທັງກໍານົດເຂດ ແລະ ຈຸດສຸມໃນການຫັນປ່ຽນເຂົ້າສູ່ລະບົບການຜະລິດກະສິກໍາສະອາດ;
2. ກວດກາ ແລະ ຢັ້ງຢືນສຸຂະນາໄມພືດ ສໍາລັບການສົ່ງອອກ, ສົ່ງອອກຕໍ່, ນໍາເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມອື່ນໆ ຢູ່ດ່ານກັກກັນພືດສາກົນ ພ້ອມທັງຄຸ້ມຄອງ, ຈັດຕັ້ງປະຕິບັດວຽກງານກັກກັນພືດ ປະຈໍາດ່ານກັກກັນພືດທ້ອງຖິ່ນ ແລະ ດ່ານປະເພນີ;
3. ສໍາຫຼວດ, ເກັບກໍາຂໍ້ມູນ, ກວດກາ, ຕິດຕາມ, ເຝົ້າລະວັງ, ພະຍາກອນ, ປ້ອງກັນ ແລະ ກໍາຈັດ, ອອກແຈ້ງການເຕືອນ, ບົດແນະນໍາດ້ານເຕັກນິກ-ການປ້ອງກັນ ແລະ ຄວບຄຸມສັດຕູພືດ ໃນແຕ່ລະຊ່ວງລະດູການ, ສະຫຼຸບ ແລະ ລາຍງານ ກ່ຽວກັບສັດຕູພືດ, ສັດຕູພືດຄວບຄຸມ ແລະ ທຸລະກິດສຸຂະນາໄມພືດ ສະຖານີກັກກັນພືດ ໃນທ້ອງຖິ່ນຂອງຕົນ;
4. ກວດກາ, ທົດສອບ ແລະ ວິໄຈ ສານເຄມີຕົກຄ້າງ, ຢາປາບສັດຕູພືດ, ຝຸ່ນເຄມີ, ຝຸ່ນອິນຊີ, ຝຸ່ນຊີວະພາບ, ແນວພັນພືດ ກ່ອນການຂຶ້ນທະບຽນ, ການນໍາເຂົ້າ, ການຈໍາໜ່າຍ ແລະ ການນໍາໃຊ້ ຢູ່ໃນທ້ອງຖິ່ນຂອງຕົນ;
5. ຊຸກຍູ້, ສົ່ງເສີມ ການນໍາໃຊ້ເຕັກນິກການຜະລິດ ແລະ ການປຸງແຕ່ງກະສິກໍາ ພາຍໃນແຂວງ ດ້ວຍການນໍາໃຊ້ຜົນສໍາເລັດທາງດ້ານວິທະຍາສາດ, ເຄື່ອງມືກົນຈັກ ແລະ ວິທີການກະເສດສຸມ ທີ່ກ້າວໜ້າ, ທັນສະໄໝເຂົ້າໃນການປູກຝັງ ເພື່ອຍົກສະມັດຕະພາບ, ປັບປຸງຄຸນນະພາບ ແລະ ປຸງແຕ່ງ, ສ້າງມູນຄ່າເພີ່ມໃຫ້ຜົນຜະລິດ ບົນພື້ນຖານຫຼັກການກະສິກໍາສະອາດ, ຫຼຸດຜ່ອນຕົ້ນທຶນການຜະລິດ ຕາມທິດພັດທະນາສີຂຽວ ແລະ ຍືນຍົງ;
6. ສ້າງ ແລະ ພັດທະນາຕາໜ່າງປ້ອງກັນພືດ ແຕ່ຂັ້ນແຂວງ, ເມືອງ ແລະ ບ້ານ ໂດຍສະເພາະ ແມ່ນການສ້າງໝໍພືດປະຈໍາບ້ານ ເພື່ອຕິດຕາມ, ເຝົ້າລະວັງ, ປ້ອງກັນ, ຄວບຄຸມ, ກໍາຈັດສັດຕູພືດ ຫຼື ຫາວິທີການແກ້ໄຂ ທາງດ້ານວິຊາການທີ່ເໝາະສົມ ໃນກໍລະນີເກີດການຕິດແປດ ຫຼື ແຜ່ລະບາດຂອງສັດຕູພືດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
7. ປະສານສົມທົບກັບຜູ້ຜະລິດ, ຜູ້ປະກອບການ ແລະ ຫົວໜ່ວຍທຸລະກິດ ພາຍໃນແຂວງ ໃນການປະຕິບັດມາດຕະຖານ ແລະ ການຂໍການຢັ້ງຢືນ ຕາມມາດຕະຖານກະສິກໍາສະອາດ ໂດຍສະເພາະແມ່ນກະສິກໍາອິນຊີ ແລະ ກະສິກໍາທີ່ດີ.
8. ເຜີຍແຜ່, ແນະນໍາ, ຈັດຝຶກອົບຮົມ, ທັດສະນະແລກປ່ຽນບົດຮຽນ, ຖ່າຍທອດເຕັກນິກດ້ານການຜະລິດ, ການປຸງແຕ່ງກະສິກໍາ, ການຕະຫຼາດ ແລະ ອໍານວຍຄວາມສະດວກ ໃຫ້ແກ່ພະນັກງານສົ່ງເສີມຂອງບັນດາເມືອງ ແລະ ສະຖານີບໍລິການເຕັກນິກ, ຫົວໜ່ວຍຟາມ, ຊາວກະສິກອນ, ກຸ່ມການຜະລິດ ສະມາຄົມຜູ້ຜະລິດກະສິກໍາ ໃນການຫັນປ່ຽນລະບົບການຜະລິດ ເຂົ້າສູ່ມາດຕະຖານກະສິກໍາສະອາດ ຕິດພັນກັບການສ້າງຄອບຄົວ ແລະ ກຸ່ມຕົວແບບ ພ້ອມທັງວິຊາການກັບທີ່ ໃນແຕ່ລະດ້ານ ພາຍໃນ

ແຂວງໃຫ້ໜັກແໜ້ນ ພ້ອມທັງສ້າງພະນັກງານກວດກາ ແລະ ຄູຝຶກມາດຕະຖານກະສິກຳສະອາດ ຂັ້ນເມືອງ ແລະ ຂັ້ນບ້ານ;

9. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຈັດ ແລະ ຄຸ້ມຄອງຕະຫຼາດນັດ, ງານວາງສະແດງສິນຄ້າ ແລະ ກິນຈັກກະສິກຳ ພາຍໃນແຂວງ ພ້ອມທັງປະຕິບັດມາດຕະການດ້ານອື່ນໆ ທີ່ເຮັດໃຫ້ມີປະໂຫຍດ ແລະ ມີປະສິດທິຜົນ;
10. ຄົ້ນຄວ້າ ແລະ ສະເໜີພະແນກ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດນຳເຂົ້າປັດໄຈການຜະລິດ ເຊັ່ນ: ແນວພັນ, ຝຸ່ນ, ຢາປາບສັດຕູພືດ ພ້ອມທັງກວດກາ, ຕິດຕາມ ການນຳເຂົ້າ, ການຈຳໜ່າຍ ແລະ ການບໍລິການ; ບຳລຸງ ແລະ ຍົກລະດັບ ບຸກຄະລາກອນຂັ້ນເມືອງ ກ່ຽວກັບວຽກງານຄຸ້ມຄອງ, ກວດກາ ແລະ ນຳໃຊ້ຢາປາບສັດຕູພືດ;
11. ຄົ້ນຄວ້າ ແລະ ນຳສະເໜີ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແຕ່ງຕັ້ງ ຫຼື ຍົກຍ້າຍ ເຈົ້າໜ້າທີ່ດ່ານກັກກັນພືດທ້ອງຖິ່ນ ແລະ ດ່ານປະເພນີ, ເຈົ້າໜ້າທີ່ກວດກາ ຢາປາບສັດຕູພືດຝຸ່ນ ແລະ ແນວພັນ;
12. ຄົ້ນຄວ້າ, ປະກອບຄຳເຫັນທາງດ້ານວິຊາການ ແລະ ນຳສະເໜີ ພະແນກກະສິກຳ ແລະ ປ່າໄມ້ ອອກໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ປ່າໄມ້, ຂໍຈົດທະບຽນ ຢາປາບສັດຕູພືດ, ຝຸ່ນ ແລະ ແນວພັນພືດ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການ;
13. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ອອກໃບທະບຽນພື້ນທີ່ປູກ ແລະ ສະຖານທີ່ຫຸ້ມຫໍ່ຜະລິດຕະພັນພືດ, ລານຕາກ, ສາງເກັບມ້ຽນພືດ, ການອົບແຫ້ງ ແລະ ການການຫຸ້ມຫໍ່-ບັນຈຸ ເພື່ອໃຫ້ສອດຄ່ອງກັບເງື່ອນໄຂການນຳເຂົ້າ ຂອງປະເທດຄູ່ຄ້າ;
14. ສະຫຼຸບ, ສັງລວມ ຜົນຂອງການຈັດຕັ້ງປະຕິບັດວຽກງານປະຈຳອາທິດ, ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ເພື່ອລາຍງານຂັ້ນເທິງຢ່າງເປັນປົກກະຕິ;
15. ປະຕິບັດຕາມໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 11 ໜ້າທີ່ ຂອງຂະແໜງລ້ຽງສັດ ແລະ ການປະມົງ**

1. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດພັດທະນາດ້ານກະສິກຳ ແລະ ປ່າໄມ້, ແຜນດຳເນີນງານ ດ້ານການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ໃຫ້ເປັນແຜນການ, ໂຄງການ ແລະ ແຜນວຽກລະອຽດ ເພື່ອຈັດຕັ້ງປະຕິບັດຢູ່ພາຍໃນແຂວງຂອງຕົນ ໃຫ້ມີປະສິດທິຜົນ;
2. ເປັນເຈົ້າການປະຕິບັດບັນດາມາດຕະການ ກັນ ແລະ ຄວບຄຸມ ພະຍາດສັດ, ພະຍາດສັດນ້ຳ ລວມທັງພະຍາດສັດຕິດຕໍ່ຈາກສັດສູ່ຄົນ ແລະ ເອົາໃຈໃສ່ ຕິດຕາມ, ກວດກາ ແລະ ສະກັດກັ້ນຄວາມສ່ຽງເປັນຕົ້ນແມ່ນ ສານຕົກຄ້າງ, ສານກະຕຸ້ນ ແລະ ວັດຖຸທີ່ໃຊ້ເປັນຢາທີ່ຈະເປັນອັນຕະລາຍຕໍ່ຊີວິດ ແລະ ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ ທີ່ອາດເກີດຈາກການຜະລິດ, ຂົນສົ່ງ, ເກັບຮັກສາ, ເຄື່ອນຍ້າຍ ແລະ ຈຳໜ່າຍສັດ-ສັດນ້ຳ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ, ສິນຄ້າປະມົງເຂົ້າ-ອອກ ແລະ ຊົມໃຊ້ຢູ່ພາຍໃນແຂວງຂອງຕົນ;
3. ຊຸກຍູ້, ສະໜັບສະໜູນ ກ່ຽວກັບການນຳໃຊ້ເຕັກນິກ-ເຕັກໂນໂລຊີເຂົ້າໃນການປັບປຸງ ແລະ ນຳໃຊ້ແນວພັນ, ອາຫານສັດ, ການປູກພືດອາຫານສັດ, ການນຳໃຊ້ຢາສັດຕະວະແພດ, ການຫັນປ່ຽນເຕັກນິກທີ່ເໝາະສົມ ລວມທັງການພັດທະນາກຸ່ມສະຫະກອນ ແລະ ສັງຄົມ, ສ້າງຕັ້ງກອງທຶນພັດທະນາການລ້ຽງສັດ ແລະ ການປະມົງ;
4. ຄຸ້ມຄອງ, ພັດທະນາວຽກງານຄວາມປອດໄພຂອງອາຫານ, ສະຫວັດດີການ, ໂຮງພັກສັດກ່ອນຂ້າ, ໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ ແລະ ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ລວມທັງການພັດທະ

ນາ ແລະ ປັບປຸງກວດກາການອະນາໄມຜະລິດຕະພັນສັດ ແລະ ສັດນໍ້າ;

5. ພັດທະນາການກວດກາສັດຕະວະແພດ ປະຈໍາດ່ານທ້ອງຖິ່ນ ແລະ ດ່ານປະເພນີ ເພື່ອຄວບຄຸມການເຄື່ອນຍ້າຍຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສິນຄ້າປະມົງ ໃຫ້ມີຄວາມປອດໄພ, ຖືກຕ້ອງ ພ້ອມທັງຄຸ້ມຄອງ ການລ້ຽງສັດນໍ້າ, ການຫາປາ, ການຈັບ ແລະ ຊົມໃຊ້ແບບຍືນຍົງ ລວມທັງວຽກງານປົກປັກຮັກສາຊັບພະຍາກອນປະມົງ ຕາມກົດໝາຍ ແລະ ລະບຽບການ;
6. ຄົ້ນຄວ້າ ແລະ ປະກອບຄໍາເຫັນ ກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ານການລ້ຽງສັດ, ສັດຕະວະແພດ, ການປະມົງ ຫຼື ການລົງທຶນດ້ານກະສິກໍາ ແລະ ປ່າໄມ້ ອື່ນ ທີ່ມີການພົວພັນກັນ ພ້ອມທັງຄຸ້ມຄອງ, ພັດທະນາ, ສ້າງເງື່ອນໄຂເອື້ອອໍານວຍ, ຕິດຕາມ, ກວດກາ ໃນການປະກອບທຸລະກິດການລ້ຽງສັດ, ສັດຕະວະແພດ ແລະ ການປະມົງຂອງຜູ້ປະກອບການ ທີ່ຢູ່ພາຍໃນແຂວງຂອງຕົນ;
7. ກວດກາ, ຕິດຕາມ ແລະ ສະກັດກັ້ນທຸກການກະທໍາທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການລ້ຽງສັດ ແລະ ສັດຕະວະແພດ ພ້ອມທັງການເປັນເຈົ້າການປະກອບສໍານວນຄະດີ ແລະ ລາຍງານການກະທໍາຄວາມຜິດຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ;
8. ສະເໜີຕໍ່ອົງການປົກຄອງແຂວງ ປະກາດ ແລະ ຍົກເລີກ ເຂດລະບາດພະຍາດສັດໃນກໍລະນີທີ່ມີການລະບາດພະຍາດສັດຢູ່ຫຼາຍເມືອງ;
9. ພົວພັນ, ຮ່ວມມື, ຕິດຕໍ່, ປະສານງານກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຢູ່ພາຍໃນ ແລະ ພາຍນອກແຂວງ ເພື່ອແລກປ່ຽນຂໍ້ມູນຂ່າວສານ, ຍາດແຍ່ງການລົງທຶນ, ຊ່ວຍເຫຼືອລ້າ ດ້ານການເງິນ ແລະ ວິຊາການ ເພື່ອພັດທະນາວຽກງານ ການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ພາຍໃນແຂວງໃຫ້ເຂັ້ມແຂງ;
10. ກວດກາ, ຕິດຕາມ, ປະເມີນຜົນ, ຖອດຖອນບົດຮຽນ, ສັງລວມ, ສະຫຼຸບ ແລະ ລາຍງານ ເປັນແຕ່ລະໄລຍະ ປະຈໍາອາທິດ, ປະຈໍາເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈໍາປີ ເພື່ອລາຍງານຂັ້ນເທິງຂອງຕົນຮັບຊາບ;
11. ປະຕິບັດຕາມໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 12 ໜ້າທີ່ ຂອງຂະແໜງປ່າໄມ້**

1. ຈັດຕັ້ງຜັນຂະຫຍາຍກົດໝາຍ, ລະບຽບການ ແລະ ນິຕິກໍາຕ່າງໆ ກ່ຽວກັບວຽກງານປ່າໄມ້ ແລະ ເປັນເຈົ້າການໃນການສ້າງ, ປະຕິບັດ ແລະ ປະເມີນແຜນຍຸດທະສາດປ່າໄມ້ໃນລະດັບແຂວງ;
2. ຜັນຂະຫຍາຍ ແລະ ເຜີຍແຜ່ ຍຸດທະສາດ, ນະໂຍບາຍ ຄຸ້ມຄອງປ່າໄມ້ແບບຍືນນານ, ສົນທິສັນຍາຕ່າງໆ ທີ່ ສປປ.ລາວ ເປັນພາຄີ ອອກເປັນແຜນງານ, ໂຄງການ ແລະ ແຜນການດໍາເນີນງານອັນລະອຽດ ພ້ອມທັງສະຫຼຸບ, ລາຍງານ ຜົນການຈັດຕັ້ງປະຕິບັດ ແຜນການ ແລະ ແຜນງົບປະມານ ປະຈໍາ 3 ເດືອນ, 6 ເດືອນ, ປະຈໍາປີ, ປະຈໍາ 05 ປີ;
3. ເປັນເຈົ້າການດໍາເນີນການ ສໍາຫຼວດ, ວາງແຜນ, ຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນໍາໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ມີຄວາມຍືນຍົງ ພ້ອມທັງຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ;
4. ຄຸ້ມຄອງການຂຸດຄົ້ນ ລວມທັງພາຫະນະ, ວັດຖຸອຸປະກອນ, ເຄື່ອງມືຂຸດຄົ້ນໄມ້ ແລະ ຄຸ້ມຄອງການເຄື່ອນຍ້າຍ ໄມ້ທ່ອນ, ໄມ້ເລື່ອຍ, ໄມ້ເຄິ່ງສໍາເລັດຮູບ, ໄມ້ສໍາເລັດຮູບ, ໄມ້ສົ່ງເຂົ້າ-ສົ່ງອອກ, ໄມ້ປະດັບ, ໄມ້ຄໍ້າແບບ, ໄມ້ຫຼັກຮື້ວ, ໄມ້ເປັນພະລັງງານ ແລະ ເຄື່ອງປ່າຂອງດົງ ລວມທັງການເຄື່ອນຍ້າຍສັດນໍ້າ, ສັດປ່າ ແລະ ຖ່ານ;
5. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງ ແລະ ຈັດຕັ້ງປະຕິບັດ ແຜນຄຸ້ມຄອງ

ປ່າໄມ້ ຂັ້ນບ້ານ ແລະ ເຄື່ອງປ່າຂອງດົງ ຕິດພັນກັບການຈັດສັນອາຊີບ ແລະ ຢຸດຕິການຖາງປ່າເຮັດໄຮ່;

6. ກຳນົດເນື້ອທີ່, ສ້າງແຜນ, ຊຸກຍູ້ ແລະ ສົ່ງເສີມ ການປູກໄມ້ ແລະ ຟື້ນຟູປ່າ ປະຈຳປີ ໄປຄຽງຄູ່ກັບການປ້ອງກັນໄຟປ່າ ແລະ ພະຍາດປົ້ງແມງ ລວມທັງ ການຂຶ້ນທະບຽນ ສວນປູກໄມ້, ເຂດຟື້ນຟູປ່າ ແລະ ຢັ້ງຢືນໄມ້ປູກ;
7. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 13 ໜ້າທີ່ ຂອງກອງກວດກາປ່າໄມ້**

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍ, ດຳລັດ, ຂໍ້ຕົກລົງ, ມະຕິ, ຄຳສັ່ງ, ຄຳແນະນຳ ແຈ້ງການ, ນິຕິກຳອື່ນ ທີ່ຂັ້ນເທິງວາງອອກ ກ່ຽວກັບວຽກງານປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ,

   ສັດນ້ຳ ແລະ ສັດປ່າ ພ້ອມທັງຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ໄດ້ຮັບຜົນດີ;
2. ຮັບ, ບັນທຶກການແຈ້ງຄວາມ, ທວງເອົາ ແລະ ກວດກາເອກະສານ ທີ່ເຫັນວ່າມີການລະເມີດລະບຽບກົດໝາຍ ກ່ຽວກັບປ່າໄມ້ ແລະ ສັດນ້ຳ-ສັດປ່າ;
3. ດຳເນີນການສືບສວນ-ສອບສວນຄະດີ ກ່ຽວກັບປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ ແລະ ສັດນ້ຳ-ສັດປ່າ ໂດຍນຳໃຊ້ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ;
4. ສະເໜີ ສ້າງຕັ້ງຈຸດກວດກາ ພ້ອມທັງເປັນເຈົ້າການຕ້ານ ແລະ ສະກັດກັ້ນ ການລັກລອບຕັດໄມ້, ທຳລາຍປ່າໄມ້, ເຄື່ອງປ່າຂອງດົງ ແລະ ສັດນ້ຳ-ສັດປ່າ ໃນຂອບເຂດທຸກປະເພດປ່າ ທີ່ໄດ້ກຳນົດໄວ້ໃນກົດໝາຍ;
5. ຂຶ້ນແຜນ, ຄຸ້ມຄອງການນຳໃຊ້ ງົບປະມານ, ພາຫະນະ ແລະ ຊັບສິນບັດຕ່າງໆ ພ້ອມທັງກໍ່ສ້າງບຳລຸງພະນັກງານ, ຕິດຕາມກວດກາ ແລະ ສະຫຼຸບການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຕ່າງໆ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອລາຍງານໃຫ້ພະແນກ ແລະ ກົມກວດກາປ່າໄມ້ ຢ່າງເປັນປົກກະຕິ;
6. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 14 ໜ້າທີ່ ຂອງຂະແໜງຊົນລະປະທານ**

1. ຈັດຕັ້ງຜັນຂະຫຍາຍນະໂຍບາຍຂອງພັກ, ດຳລັດ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳຕ່າງໆ ຂອງຂັ້ນເທິງວາງອອກ ມາເປັນແຜນງານ, ແຜນການ, ໂຄງການ ຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ;
2. ຂຶ້ນແຜນງົບປະມານການສຶກສາ, ການສຳຫຼວດ-ອອກແບບ, ກໍ່ສ້າງ, ສ້ອມແປງ ແລະ ຕິດຕາມກວດກາ, ຊຸກຍູ້ ການນຳໃຊ້ນ້ຳຊົນລະປະທານ ປະຈຳປີ ຫຼື ແຜນສຸກເສີນ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ ໂດຍເອກະພາບສູງທາງດ້ານເຕັກນິກວິຊາການກັບກົມຊົນລະປະທານ ແລະ ພະແນກການຕົນ ພ້ອມທັງຈັດຕັ້ງປະຕິບັດ ໃຫ້ທ່ວງທັນກັບເວລາ;
3. ຄຸ້ມຄອງ, ວາງແຜນ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການສຶກສາ, ການສຳຫຼວດ-ອອກແບບ, ການກໍ່ສ້າງຊົນລະປະທານ ແລະ ການລະບາຍ ໃຫ້ໄດ້ຕາມມາດຕະຖານເຕັກນິກ ເພື່ອຮັບປະກັນໃນການສະໜອງນ້ຳໃຫ້ແກ່ການຜະລິດກະສິກຳ ໂດຍຕັ້ງປະຕິບັດຕາມການແບ່ງຂັ້ນຄຸ້ມຄອງ ຢ່າງມີປະສິດທິຜົນ;
4. ຕິດຕາມ, ກວດກາ ວຽກງານສຳຫຼວດ-ອອກແບບ, ການກໍ່ສ້າງ, ຄຸ້ມຄອງໂຄງການ ໃຫ້ສອດຄ່ອງກັບແຜນການໃຊ້ຈ່າຍ, ສະຫຼຸບ ແລະ ລາຍງານ ໃຫ້ພະແນກ ແລະ ກົມຊົນລະປະທານ ຕາມລະບຽບການ

ແລະ ເປັນປົກກະຕິ;

5. ປະກອບສ່ວນໃນການຊຸກຍູ້ ສົ່ງເສີມເຕັກນິກກະສິກຳ ແລະ ປ່າໄມ້ ຂອງແຂວງ, ເມືອງ, ກຸ່ມບ້ານພັດທະນາ ແລະ ເຂດຈຸດສຸມ ເພື່ອຈັດຕັ້ງປະຕິບັດການຄຸ້ມຄອງ, ຈັດສັນ, ບໍລິຫານ ແລະ ເກັບຄ່ານ້ຳ ພ້ອມທັງເກັບກຳ ແລະ ສະໜອງຂໍ້ມູນຂ່າວສານດ້ານຊົນລະປະທານ ຮັບໃຊ້ໃຫ້ແກ່ການກໍ່ສ້າງ, ຟື້ນຟູ ແລະ ສ້ອມແປງ ໂຄງການຊົນລະປະທານ ໃຫ້ສອດຄ່ອງກັບສະພາບຈຸດພິເສດ ແລະ ທ່າແຮງຂອງແຕ່ລະທ້ອງຖິ່ນ;
6. ຈັດຕັ້ງການຄຸ້ມຄອງລະບົບຊົນລະປະທານໃຫ້ມີປະສິດທິຜົນສູງ ພ້ອມທັງໃຫ້ການແນະນຳ, ຝຶກອົບຮົມດ້ານວິຊາການ ແກ່ກຸ່ມນຳໃຊ້ນ້ຳໃນການນຳໃຊ້ນ້ຳຊົນລະປະທານ ໂດຍການສ້າງບຸກຄະລາກອນກັບທີ່ ຢ່າງເປັນເຈົ້າການ ແລະ ມີປະສິດທິຜົນ ພ້ອມທັງກຽມຄວາມພ້ອມໃນການເຂົ້າຮ່ວມຂະບວນການຕ້ານແລ້ງ, ຕ້ານຖ້ວມ ຂັ້ນສຸກເສີນຢ່າງເປັນເຈົ້າການ;
7. ປະຕິບັດກົດໝາຍ ວ່າດ້ວຍຊົນລະປະທານ, ກົດໝາຍ ວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ) ແລະ ບັນດານິຕິກຳທີ່ກ່ຽວຂ້ອງກັບການພັດທະນາຊົນລະປະທານ ແລະ ການລະບາຍ ຫັນໄປສູ່ການຄຸ້ມຄອງແບບມອບ-ໂອນ ຢ່າງຂາດຕົວ ແລະ ຫັນໄປສູ່ທັນສະໄໝເທື່ອລະກ້າວ;
8. ປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານພັດທະນາຊົນລະປະທານ ແລະ ການລະບາຍ, ປັບປຸງຫົວໜ່ວຍເສດຖະກິດລວມໝູ່, ການສ້າງກອງທຶນຢູ່ໃນໂຄງການຊົນລະປະທານໃຫ້ເຂັ້ມແຂງ ເຊັ່ນ: ກຸ່ມຜະລິດ, ສະມາຄົມຜູ້ປະກອບການ ແລະ ສະຫະກອນ;
9. ສຶກສາການສຳຫຼວດ-ອອກແບບ, ຕິດຕາມກວດກາການກໍ່ສ້າງໂຄງການຊົນລະປະທານ ຕາມການແບ່ງຂັ້ນຄຸ້ມຄອງ ພ້ອມທັງເກັບກຳ, ວິໄຈ ແລະ ສ້າງຖານຂໍ້ມູນ ເພື່ອພັດທະນາໂຄງການຊົນລະປະທານ ແລະ ການລະບາຍ ແລະ ຮັບປະກັນການສະໜອງນ້ຳໃຫ້ເນື້ອທີ່ການຜະລິດກະສິກຳຢ່າງທົ່ວເຖິງ;
10. ຄົ້ນຄວ້າ, ສ້າງ, ພັດທະນາ ແລະ ບໍລິການຂໍ້ມູນຂ່າວສານດ້ານຊົນລະປະທານ ພ້ອມທັງເຜີຍແຜ່ຜົນສຳເລັດຂອງການຄົ້ນຄວ້າທົດລອງ ເພື່ອຕອບສະໜອງໃຫ້ແກ່ສັງຄົມຢ່າງກວ້າງຂວາງ;
11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 15 ໜ້າທີ່ ຂອງຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ**

1. ຄົ້ນຄວ້າ, ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ແຜນຍຸດທະສາດຂອງຂະແໜງກະສິກຳ ແລະ ປ່າໄມ້ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
2. ສຶກສາ, ຄົ້ນຄວ້າ, ສຳຫຼວດ, ຈັດສັນ, ຈັດປະເພດ, ແລະ ວິໄຈ ເພື່ອປະເມີນຄຸນນະພາບຂອງດິນ, ແບ່ງເຂດການຜະລິດກະສິກຳ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ ຕາມທິດທີ່ຍືນຍົງ ພ້ອມທັງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການສຳຫຼວດ, ຈັດສັນ, ກຳນົດ ແບ່ງເຂດທີ່ດິນກະສິກຳຂັ້ນສຳມະໂນ, ອອກໃບຢັ້ງຢືນການນຳໃຊ້ ແລະ ການພັດທະນາທີ່ດິນກະສິກຳ;
3. ຄົ້ນຄວ້າ, ປະກອບຄຳເຫັນ ດ້ານວິຊາການໃນການອະນຸມັດໃຫ້ ເຊົ່າ, ສຳປະທານ, ການຫັນປ່ຽນທີ່ດິນກະສິກຳໄປສູ່ເປົ້າໝາຍອື່ນ ເພື່ອເປັນເຄື່ອງມືໃນການຄຸ້ມຄອງທີ່ດິນກະສິກຳ ຕາມທ່າແຮງ ແລະ ສະພາບເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ;
4. ເກັບກຳ ແລະ ສ້າງຖານຂໍ້ມູນທີ່ດິນກະສິກຳ ເພື່ອການຕິດຕາມ, ກວດກາ, ປະເມີນຜົນ ກ່ຽວກັບລະບຽບການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ, ການບູລະນະ ແລະ ປັບປຸງດິນ ເພື່ອແນ່ໃສ່ເຮັດໃຫ້ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ມີປະສິດທິຜົນ ແລະ ຍືນຍົງ;

5. ຄຸ້ມຄອງ, ຕິດຕາມ, ກວດກາ, ທົດສອບ, ວິໄຈ, ຢັ້ງຢືນຄຸນນະພາບຝຸ່ນທີ່ຜະລິດ ແລະ ຈຳໜ່າຍພາຍໃນແຂວງ, ນຳເຂົ້າ-ສົ່ງອອກ ລວມທັງວັດຖຸດິບທີ່ນຳມາຜະລິດຝຸ່ນ, ກຳນົດອັດຕາ ແລະ ໃຫ້ຄຳແນະນຳ ໃນການນຳໃຊ້ຝຸ່ນ ເພື່ອຍົກຜະລິດຕະພາບ;
6. ພົວພັນ ແລະ ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານ ເຕັກນິກວິຊາການ ແລະ ທຶນຮອນ ເພື່ອຈັດຕັ້ງປະຕິບັດບັນດາແຜນງານ, ແຜນການ ແລະ ໂຄງການໃນຂົງເຂດວຽກງານຂອງຕົນ;
7. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ແຜນດຳເນີນງານ, ບັນດາແຜນງານ, ໂຄງການ ແລະ ກິດຈະກຳຕ່າງໆ ໃນຄວາມຮັບຜິດຊອບຂອງຕົນ ຢ່າງເປັນລະບົບຕໍ່ເນື່ອງ ພ້ອມທັງຄຸ້ມຄອງ, ນຳໃຊ້ຊັບສົມບັດ, ວັດຖຸສິ່ງຂອງ, ພາຫະນະ ແລະ ງົບປະມານ ທີ່ພະແນກ ແລະ ຜູ້ໃຫ້ທຶນສາກົນຕ່າງໆ ອະນຸມັດໃຫ້ ຢ່າງເປັນລະບົບ, ມີຄວາມຮັບຜິດຊອບ ແລະ ເກີດຜົນປະໂຫຍດສູງສຸດ;
8. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 16 ໜ້າທີ່ ຂອງຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ**

1. ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກຳນົດແຜນການ, ໂຄງການລົງທຶນຂອງລັດ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ພ້ອມທັງຊຸກຍູ້ ຕິດຕາມ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການພັດທະນາຊົນນະບົດ ໃຫ້ໄດ້ຮັບຜົນດີ;
2. ປະສານກັບພະແນກ ແລະ ເມືອງທີ່ກ່ຽວຂ້ອງ ຈັດຕັ້ງການກວດກາ, ຕິດຕາມ ການຈັດຕັ້ງປະຕິບັດແຜນການ,ໂຄງການການລົງທຶນຂອງລັດໃນວຽກງານລຶບລ້າງຄວາມທຸກຍາກ;
3. ປະສານກັບພະແນກການ ແລະ ເມືອງທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ການຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດບັນດາໂຄງການຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມຈາກຕ່າງປະເທດ ທີ່ສະໜັບສະໜູນໃຫ້ໂຄງການລຶບລ້າງຄວາມທຸກຍາກ ໃນແຕ່ລະໄລຍະ;
4. ຄົ້ນຄວ້າ, ເກັບກຳ, ສັງລວມ ແລະ ຄຸ້ມຄອງ ສະຖິຕິຕ່າງໆ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;
5. ປະສານກັບຂະແໜງການທີ່ກ່ຽວຂ້ອງ ຄຸ້ມຄອງ, ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການນຳໃຊ້ທຶນຮອນຂອງຕ່າງປະເທດ, ອົງການຈັດຕັ້ງສາກົນ, ສະຖາບັນການເງິນ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ ທີ່ຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ ເປັນເລຂາ ຫຼື ເປັນຜູ້ປະສານງານ;
6. ຄຸ້ມຄອງ, ຕິດຕາມ, ກວດກາ ປະເມີນຜົນການຈັດຕັ້ງປະຕິບັດກອງທຶນຫຼຸດຜ່ອນຄວາມທຸກຍາກ ພ້ອມທັງສະຫຼຸບ, ຕີລາຄາ ໝາກຜົນຂອງການນຳໃຊ້ທຶນເຂົ້າໃນວຽກງານລຶບລ້າງຄວາມທຸກຍາກ;
7. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດກອງທຶນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເປັນຕົ້ນແມ່ນກອງທຶນພັດທະນາບ້ານ ແລະ ກອງທຶນອື່ນໆ ໃຫ້ເຄື່ອນໄຫວຢ່າງມີປະສິດທິຜົນສູງ ພ້ອມທັງສະຫຼຸບ, ຕີລາຄາ ໝາກຜົນຂອງການນຳໃຊ້ເງິນກອງທຶນເຂົ້າໃນວຽກງານລຶບລ້າງຄວາມທຸກຍາກ ແລະ ພັດທະນາກຸ່ມບ້ານ ທົ່ວແຂວງ;
8. ປະສານກັບບັນດາເມືອງໃນການກຳນົດ ບ້ານ, ກຸ່ມບ້ານ ພັດທະນາ, ກຳນົດຈຸດສຸມພັດທະນາ, ການໂຮມບ້ານ ແລະ ຊີ້ນຳການສ້າງແຜນພັດທະນາບ້ານ ແລະ ກຸ່ມບ້ານພັດທະນາ ພ້ອມທັງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດ ການສ້າງບ້ານ ແລະ ກຸ່ມບ້ານ ພັດທະນາ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນເຂດຊົນນະບົດ;
9. ເປັນໃຈກາງໃນການປະເມີນຄວາມທຸກຍາກ, ບ້ານພັດທະນາ, ກຸ່ມບ້ານພັດທະນາ ແລະ ເມືອງ ເພື່ອຄົ້ນຄວ້າການສ້າງຕັ້ງສະຫະກອນການຜະລິດ, ການເຂົ້າເຖິງຕະຫຼາດຂອງປະຊາຊົນໃນຊົນນະບົດ

ພ້ອມທັງສ້າງຕັ້ງກຸ່ມການຜະລິດໃນແຕ່ລະບ້ານ, ບ້ານພັດທະນາ, ເຂດພັດທະນາເສດຖະກິດ, ຈຸດສຸມຂອງແຂວງ ແລະ ເມືອງ;

10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 17 ໜ້າທີ່ ຂອງສູນສົ່ງເສີມເຕັກນິກກະສິກຳ ແລະ ປ່າໄມ້ ຮ່ວມມືລາວ-ຫວຽດນາມ ບ້ານອີ້ງ**

1. ດຳເນີນການສຶກສາ, ທົດລອງດ້ານແນວພັນ, ເຕັກນິກ, ວິທີການຜະລິດກະສິກຳ ທີ່ໃຫ້ຜະລິດຕະພາບສູງ ແລະ ຮັບປະກັນຄວາມຍືນຍົງຕາມຂົງເຂດບຸລິມະສິດ;
2. ຄົ້ນຄວ້າ, ນຳສະເໜີປັບປຸງກົງຈັກການຈັດຕັ້ງ, ກຳນົດຕຳແໜ່ງງານ, ກຳນົດແຜນກໍ່ສ້າງບຳລຸງຍົກລະດັບ, ຄຸ້ມຄອງນຳໃຊ້ ແລະ ປະຕິບັດນະໂຍບາຍຕ່າງໆ ໃຫ້ແກ່ພະນັກງານ-ລັດຖະກອນຢູ່ພາຍໃນສູນຂອງຕົນ;
3. ສຳຫຼວດ, ສຶກສາ, ເຕົ້າໂຮມ, ຄັດເລືອກ, ສ້າງ, ຂະຫຍາຍ ແລະ ບໍລິການດ້ານແນວພັນພືດ ແລະ ແນວພັນສັດ ແນໃສ່ຍົກຜະລິດຕະພາບ ແລະ ປັບຕົວເຂົ້າກັບການປ່ຽນແປງຂອງອາກາດພ້ອມທັງປົກປັກຮັກສາສາຍພັນ ແລະ ແນວພັນໃຫ້ມີຄວາມຍືນຍົງ;
4. ນຳເອົາເຕັກນິກ-ເຕັກໂນໂລຊີ ດ້ານການນຳໃຊ້ກົນຈັກກະສິກຳ, ຊົນລະກະເສດ, ເຕັກໂນໂລຊີຫຼັງເກັບກ່ຽວ, ລະບົບ, ຮູບແບບ ແລະ ວິທີການຜະລິດກະສິກຳທີ່ມີປະສິດທິພາບ, ປະສິດທິຜົນໂດຍສົມທົບກັບພາກສ່ວນສົ່ງເສີມກະສິກຳ;
5. ເກັບກຳ, ລວບລວມ, ຄຸ້ມຄອງ, ໂຄສະນາເຜີຍແຜ່ ແລະ ບໍລິການຂໍ້ມູນຂ່າວສານການທົດລອງຂອງຕົນເພື່ອປະກອບສ່ວນໃນການກຳນົດນະໂຍບາຍແລະຍຸດທະສາດການພັດທະນາກະສິກຳຂອງແຂວງ;
6. ປະສານສົມທົບກັບບັນດາຂະແໜງທີ່ກ່ຽວຂ້ອງ, ຫ້ອງການກະສິກຳແລະປ່າໄມ້ປະຈຳເມືອງ, ສູນບໍລິການເຕັກນິກ ແລະ ພາກສ່ວນເສດຖະກິດຕ່າງໆ ເພື່ອຜັນຂະຫຍາຍຜົນສຳເລັດ ຂອງການທົດລອງອອກສູ່ການຜະລິດຢ່າງກວ້າງຂວາງ;
7. ກໍ່ສ້າງແລະບຳລຸງຍົກລະດັບພະນັກງານ, ນັກວິຊາການສະເພາະດ້ານຂອງຕົນໃຫ້ມີຄວາມຮູ້ຄວາມສາມາດພຽງພໍ ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານການທົດລອງໃນສະເພາະໜ້າ ແລະ ຍາວນານ;
8. ພົວພັນຮ່ວມມື, ຂົນຂວາຍແຫຼ່ງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອເສີມສ້າງຄວາມອາດສາມາດຂອງສູນໃຫ້ມີຄວາມເຂັ້ມແຂງ;
9. ສ້າງ ນຳສະເໜີແຜນງົບປະມານ ແລະ ແຜນການລົງທຶນປະຈຳປີ ເຂົ້າຮັບໃຊ້ແຜນການເຄື່ອນໄຫວຂອງຕົນ ໃຫ້ໄດ້ຮັບຜົນດີ, ພ້ອມທັງຊຸກຍູ້ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານ ຕາມລະບຽບຫຼັກການ;
10. ໃຫ້ບໍລິການທາງດ້ານວິຊາການ ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ບົນພື້ນຖານເຊັນສັນຍາແບບມອບເໝົາ ແລະ ໄດ້ຮັບການເຫັນດີ ຈາກພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ;
11. ຄຸ້ມຄອງແລະນຳໃຊ້ຊັບສົມບັດ, ວັດຖຸສິ່ງຂອງ, ພາຫະນະ ແລະ ງົບປະມານທີ່ໄດ້ຮັບການອະນຸມັດໃຫ້ຢ່າງມີຄວາມຮັບຜິດຊອບ ແລະໃຫ້ເກີດຜົນປະໂຫຍດສູງສຸດ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 18 ໜ້າທີ່ ຂອງສູນສົ່ງເສີມເຕັກນິກ ກະສິກຳ ແລະ ປ່າໄມ້ ສີບຮາວ**

1. ດຳເນີນການສຶກສາ, ທົດລອງດ້ານແນວພັນ, ເຕັກນິກ, ວິທີການຜະລິດກະສິກຳທີ່ໃຫ້ຜະລິດຕະພາບສູງ ແລະ ຮັບປະກັນຄວາມຍືນຍົງ ຕາມຂົງເຂດບຸລິມະສິດ;
2. ເຕົ້າໂຮມ, ຄັດເລືອກ, ສ້າງ, ຂະຫຍາຍ ແລະ ບໍລິການດ້ານແນວພັນພືດ ແລະ ແນວພັນສັດ ພ້ອມທັງ

ປົກປັກຮັກສາສາຍພັນ ແລະ ແນວພັນໃຫ້ມີຄວາມຍືນຍົງ;

3. ນຳໃຊ້ກົນຈັກກະສິກຳ, ຊີນລະກະເສດ, ເຕັກໂນໂລຊີຫຼັງເກັບກ່ຽວ, ລະບົບ, ຮູບແບບ ແລະ ວິທີການຜະລິດກະສິກຳ ທີ່ມີປະສິດທິພາບ, ປະສິດທິຜົນໂດຍສົມທົບກັບພາກສ່ວນສົ່ງເສີມກະສິກຳ;
4. ເກັບກຳ, ລວບລວມ, ຄຸ້ມຄອງ, ໂຄສະນາເຜີຍແຜ່ ແລະ ບໍລິການຂໍ້ມູນຂ່າວສານ ເພື່ອປະກອບສ່ວນໃນການກຳນົດນະໂຍບາຍ ແລະ ຍຸດທະສາດການພັດທະນາກະສິກຳຂອງແຂວງ;
5. ປະສານສົມທົບກັບບັນດາຂະແໜງທີ່ກ່ຽວຂ້ອງ, ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ, ແລະ ພາກສ່ວນເສດຖະກິດຕ່າງໆ ເພື່ອຜັນຂະຫຍາຍຜົນສຳເລັດ ຂອງການທົດລອງອອກສູ່ການຜະລິດຢ່າງກວ້າງຂວາງ;
6. ພົວພັນຮ່ວມມື, ຂົນຂວາຍແຫຼ່ງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອເສີມສ້າງຄວາມອາດສາມາດຂອງສູນໃຫ້ມີຄວາມເຂັ້ມແຂງ;
7. ສ້າງ ນຳສະເໜີແຜນງົບປະມານ ແລະ ແຜນການລົງທຶນປະຈຳປີ ເຂົ້າຮັບໃຊ້ແຜນການເຄື່ອນໄຫວຂອງຕົນໃຫ້ໄດ້ຮັບຜົນດີ, ພ້ອມທັງຊຸກຍູ້ ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານຕາມລະບຽບຫຼັກການ;
8. ໃຫ້ບໍລິການທາງດ້ານວິຊາການ ຕາມຄວາມຮຽກຮ້ອງຕ້ອງການ ຂອງສັງຄົມບົນພື້ນຖານເຊັນສັນຍາແບບມອບເໝົາ ແລະ ໄດ້ຮັບການເຫັນດີ ຈາກພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ;
9. ຄຸ້ມຄອງ ແລະ ນຳໃຊ້ຊັບສົມບັດ, ວັດຖຸສິ່ງຂອງ, ພາຫະນະ ແລະ ງົບປະມານທີ່ໄດ້ຮັບການອະນຸມັດໃຫ້ຢ່າງມີຄວາມຮັບຜິດຊອບ ແລະ ໃຫ້ເກີດຜົນປະໂຫຍດສູງສຸດ;
10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 19 ຫຼັກການ

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບສົມທົບກັບການປະຕິບັດລະບອບຫົວໜ້າດຽວ ຕາມລະບົບແບ່ງຂັ້ນຄຸ້ມຄອງ ບົນພື້ນຖານມີການແບ່ງງານກັນຢ່າງລະອຽດ, ຈະແຈ້ງໃນໝູ່ຄະນະ ພ້ອມທັງມອບຄວາມຮັບຜິດຊອບ, ສິດໃນການຕັດສິນບັນຫາພາຍໃນຂອບເຂດຂອງແຕ່ລະຂັ້ນ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;
2. ທຸກການເຄື່ອນໄຫວວຽກງານຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຫົວພັນ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ລະບຽບກົດໝາຍ, ຫຼັກການລວມຂອງລັດຖະບານ ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ຂອງກະຊວງກະສິກຳ ແລະ ປ່າໄມ້ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 20 ແບບແຜນວິທີເຮັດວຽກ

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ ແລະ ປະສານສົມທົບກັບຫ້ອງການ, ບັນດາກົມ, ອົງການລັດທຽບເທົ່າກົມ, ຂະແໜງການສາຍຕັ້ງ ແລະ ໂຄງການອື່ນໆ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ເພື່ອຈັດຕັ້ງປະຕິບັດວຽກງານໃຫ້ສຳເລັດ ຕາມເປົ້າໝາຍທີ່ວາງໄວ້;

2. ຫົວໜ້າພະແນກຮັບຜິດຊອບໂດຍກົງຕໍ່ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ການນຳຂອງແຂວງ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຫົວໜ້າພະແນກມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກໃດໜຶ່ງ ຕາມການແບ່ງຄວາມຮັບຜິດຊອບ ແລະ ມອບໝາຍຂອງຫົວໜ້າພະແນກ;
3. ຫົວໜ້າພະແນກ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ກໍລະນີຕິດຂັດ ຫຼື ໄປເຄື່ອນໄຫວວຽກທາງໄກ ຕ້ອງມອບສິດປະຈຳການຊົ່ວຄາວໃຫ້ຮອງຫົວໜ້າພະແນກຜູ້ໃດຜູ້ໜຶ່ງຮັກສາການແທນ ແລະເມື່ອຫົວໜ້າພະແນກກັບຄືນມາປະຈຳການ, ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ຕົນໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງໃຫ້ຫົວໜ້າຊາບ;
4. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບ, ຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງປະຕິບັດລາຍງານສ່ອງແສງ ຢ່າງເຂັ້ມງວດ;
5. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ;
6. ປະຕິບັດລະບອບປະຊຸມ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ຫຼື ກອງປະຊຸມປະຈຳປີ, ປະຕິບັດລະບອບລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງແຂວງຢ່າງເປັນປົກກະຕິ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 21 ງົບປະມານ ແລະ ຕາປະທັບ**

ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຫົວພັນ ມີງົບປະມານ ແລະ ຕາປະທັບ ເປັນຂອງຕົນເອງ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການກຳນົດ.

**ມາດຕາ 22 ການຜັນຂະຫຍາຍ**

ມອບໃຫ້ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຫົວພັນ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ, ບັນດາຂະແໜງ, ສູນ, ກອງຄຸ້ມຄອງເຂດປ່າສະຫງວນ ແລະ ປ່າປ້ອງກັນ ທີ່ໄດ້ກຳນົດໄວ້ ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ ໃຫ້ລະອຽດ, ຈະແຈ້ງ, ຄົບຖ້ວນ ແລະ ຮັດກຸມ ເພື່ອຮັບປະກັນການປະຕິບັດວຽກງານ ໃຫ້ໄດ້ຮັບຜົນດີ.

**ມາດຕາ 23 ການຈັດຕັ້ງປະຕິບັດ**

ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຫົວພັນ, ຫ້ອງການ, ບັນດາກົມ, ບັນດາອົງການລັດທຽບເທົ່າກົມ, ອົງການປົກຄອງທ້ອງຖິ່ນ, ບັນດາພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງ, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ, ສູນ, ກອງຄຸ້ມຄອງເຂດປ່າສະຫງວນ ແລະ ປ່າປ້ອງກັນ, ສະຖານີ, ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 24 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2200/ກປ, ລົງວັນທີ 14 ກັນຍາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງ.

ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້

ລຽນ ທິແກ້ວ